# ຮັບ
# ບັບຕິສະມາ
# ດ້ວຍນ້ຳຕາມ
# ພຣະຄຳພີ
# ສອນ

**Water Baptism**

By Bunthean Nhothsiri

ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ *(ໂຣມ 2:23)* ຜົນຂອງຄວາມບາບຄືຄວາມຕາຍ ຕາຍທັງຮ່າງກາຍແລະວິນຍານ ພຣະຄັມໄດ້ສອນຢ່າງຊັດແຈ້ງວ່າ ຜູ້ທີ່ມີຄວາມບາບໃນຊີວິດ ບໍ່ສາມາດເຂົ້າໄປໃນແຜ່ນດິນ ຂອງພຣະເຈົ້າໄດ້. (ເຮັບເຣີ 12:14).

ພຣະຄຳຂອງພຣະເຈົ້າບອກເຮົາຄືງໆວ່າ ແລ້ວຕາມພຣະບັນຍັດນັ້ນ ເກືອບທຸກສິ່ງຕ້ອງຊຳຮະດ້ວຍເລືອດ ແລະຖ້າບໍ່ມີເລືອດໄຫລອອກ ແລ້ວການໃຫ້ອະພັຍກໍບໍ່ມີ. (ເຮັບເຣີ 9:19-26) ພຣະເຈົ້າຊົງເບິ່ງລົງມາເທິງແຜ່ນດິນໂລກແລະພຣະອົງເຫັນວ່າບໍ່ມີຜູ້ໃດດີຈັກຄົນ ເຫດສັນນັ້ນ ພຣະເຈົ້າໄດ້ຊົງສະເດັດລົງມາ ຈາກເມືອງສວັນໃນສະພາບມະນຸດເອີ້ນວ່າ ພຣະເຢຊູ ເພື່ອຈະຕາຍແທນຄວາມຜິດບາບຂອງຊາວໂລກທັງໝົດ. ຂໍ້ພຣະຄັມພີໄດ້ສຳແດງໃຫ້ເຮົາເຫັນວ່າ ພຣະເຢຊູຄື ເອມານູເອັນ ຫຼື ພຣະເຈົ້າຊົງສະຖິດຢູ່ກັບເຮົາທັງຫຼາຍ. (ມັດທາຍ 1:21-23; ເອຊາຢາ 9:6; 1 ຕີໂມທຽວ 3:16).

ພຣະເຢຊູ ທາງຝ່າຍເນື້ອໜັງ ພຣະອົງກໍຖືກທົດລອງ ເໝືອນກັນກັບເຮົາທຸກຄົນ, ແຕ່ວ່າພຣະອົງບໍ່ໄດ້ເຮັດບາບຈັກເທື່ອ. (ເຮັບເຣີ4:15) ພຣະອົງສະເດັດລົງມາ ເພື່ອເຮົາທຸກຄົນຈະມີຊີວິດອັນຕະລອດໄປ. ພຣະອົງປະກາດແລະສັ່ງໃຫ້ມະນຸດທັງປວງ ປະໃຈເກົ່າເອົາໃຈໃໝ່. ພຣະຄຳຂອງພຣະອົງປະກາດວ່າ ຖ້າມະນຸດບໍ່ບັງເກີດໃໝ່ຈາກນ້ຳ *(ຮັບບັບຕິສະມາດ້ວຍນ້ຳ)* ແລະພຣະວິນຍານ *(ເຕັມໄປດ້ວຍພຣະວິນຍານບໍຣິສຸດ)* ຈະເຂົ້າໄປໃນພຣະຣາຊແຜ່ນດິນ ຂອງພຣະເຈົ້າບໍ່ໄດ້.

(ໂຢຮັນ 3:5).

ພຣະເຢຊູຊົງວາຍພຣະຊົນ ຢູ່ເທິງໄມ້ກາງແຂນ ເພື່ອໄຖ່ບາບມະນຸດທັງປວງ. ແມ້ນວ່າພຣະອົງຖືກ ການທົດລອງ ເໝືອນກັບເຮົາທຸກຄົນຖືກທົດລອງ ພຣະອົງກໍຍັງບໍ່ມີຄວາມຜິດບາບ ແລະເປັນເຄື່ອງບູຊາ ອັນມີຄ່າສຳຫຼັບຊາວໂລກ. ເພາະວ່າເລືອດຂອງພຣະເຢ ຊູ ໄດ້ໄຫຼອອກມາ ກໍເປັນການອະພັຍບາບສຳຫຼັບມະ ນຸດທັງປວງຜູ້ຕິດຕາມຄວາມລອດພົ້ນ.

ຫຼັງຈາກຄວາມຕາຍຂອງພຣະອົງ ເທິງໄມ້ກາງແຂນ ເຂົາເອົາພຣະອົງໄປຝັງໄວ້ໃນຖ້ຳ ໃນມື້ທີ່ສາມ ພຣະອົງ ໄດ້ຊົງຟື້ນຂຶ້ນມາ ເໝືອນກັບໄດ້ທຳນວາຍມາແລ້ວ. (ລູກາ 24:49) ຫຼັງຈາກການຟື້ນຂຶ້ນມາຈາກຄວາມ ຕາຍພຣະອົງໄດ້ຊົງຍັງສະຖິດຢູ່ກັບອັຄສາວົກຂອງ ພຣະອົງ 40 ມື້ ແນະນຳໃຫ້ເຂົາທັງຫຼາຍໃນສິ່ງກ່ຽວ ກັບແຜ່ນດິນຂອງພຣະເຈົ້າ. ກ່ອນພຣະອົງຈະສະເດັດ ກັບເມືອງສວັນຄືນ ພຣະອົງຊົງເຮັດໃຫ້ອັຄສາວົກຂອງ ພຣະອົງແນ່ໃຈວ່າ ພຣະອົງຈະຊົງສົ່ງພຣະສັນຍາຂອງ ພຣະບິດາ, ຄືບັບຕິສະມາດ້ວຍພຣະວິນຍານບໍຣິສຸດ (ລູກາ 24:49)

ໃນວັນເທສການເພັນເຕຄໍສະເຕ ພຣະວິນຍານບໍຣິ ສຸດໄດ້ປະທານໃຫ້ອັຄສາວົກກຸ່ມໜຶ່ງປະມານ 120 ຄົນ ຜູ້ໄດ້ລໍຖ້າຢູ່ຫ້ອງຊັ້ນເທິງ ໃນເມື່ອເຂົາກຳລັງລໍຖ້າຢູ່ ກໍມີລີ້ນເປັນຮູບເໝືອນແປວໄຟປາກົດຢູ່ເທິງເຂົາ ແຕ່ ລະຄົນ. ເຂົາເຫຼົ່ານັ້ນກໍເຕັມໄປດ້ວຍພຣະວິນຍານບໍຣິ ສຸດແລະຕັ້ງຕົ້ນປາກພາສາຕ່າງໆ ຕາມທີ່ພຣະວິນ ຍານຊົງໂພດໃຫ້ເຂົາເວົ້າ.

ສຽງຢູ່ເທິງຫ້ອງຊັ້ນເທິງນັ້ນ ໄດ້ນຳພາຄົນຫຼາຍຄົນມາແລະເຮັດໃຫ້ເຂົາປລາດແລະງຶດອັສຈັນໃຈ. ເຂົາໄດ້ຖາມກັນວ່າ "ນີ້ໝາຍຄວາມວ່າຢ່າງໃດ?" ເປໂຕຜູ້ເປັນອັຄສາວົກ, ໄດ້ປະກາດເຖິງເຣື່ອງຄຳທຳນວາຍກ່ຽວກັບຂອງປະທານມາຈາກພຣະເຈົ້າ ທີ່ພຣະອົງໄດ້ຊົງສັນຍາໄວ້ ແລ້ວເພິ່ນໄດ້ເທສນາຕໍ່ໄປວ່າ, ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບພຣະຣາຊທານ ຄືພຣະວິນຍານບໍຣິສຸດ." ແລ້ວເພິ່ນໄດ້ປະກາດຕໍ່ໄປອີກວ່າ, "ດ້ວຍວ່າພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫຼາຍ, ກັບລູກຫຼານຂອງພວກທ່ານ, ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ". ກິຈການ 2:38, 39)

ຄຳປະກາດຂອງເປໂຕໄດ້ເທສນາ ໃນວັນເທສການເພັນເຕຄໍສະເຕໄດ້ນຳຄົນເຂົ້າເຊື່ອປະມານ 3000 ຄົນ. ຄຳປະກາດນັ້ນມີຜົນເກີດຂຶ້ນຢູ່. ການຖິ້ມໃຈເກົ່າເອົາໃຈໃໝ່, ການຮັບບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດ ແລະການເຕັມໄປດ້ວຍພນະວິນຍານບໍຣິສຸດຍັງມີຣິດອຳນາດທີ່ຊ່ວຍໃຫ້ລອດພົ້ນໄດ້ຢູ່.

ໃນການຖິ້ມໃຈເກົ່າເອົາໃຈໃໝ່ ຄືຜູ້ທີ່ຫັນຈາກຄວາມຜິດບາບຂອງເຂົາ ດ້ວຍຄວາມເຊື່ອວ່າພຣະເຢຊູຊົງເສັຽຄ່າແທນເຂົາຢູ່ເທິງໄມ້ກາງແຂນ ເພື່ອຄວາມຜິດບາບຂອງທຸກໆຄົນ. ຜູ້ທີ່ຈະປະໃຈເກົ່າເອົາໃຈໃໝ່ນັ້ນ, ທ່ານຈະຕ້ອງຄຶງ"ຊີວິດເກົ່າ" ຂອງຕົນເອງ ກັບພຣະ

ເຢຊູ (ໂຣມ 6:6) ໃນເມື່ອທ່ານຮັບບັບຕິສະມາໃນພຣະ
ນາມຂອງພຣະເຢຊູຄຣິດແລ້ວ, ທ່ານກໍໄດ້ຝັງກັບ
ພຣະຄຣິດ. (ໂຣມ 6:3)

ຕໍ່ໄປ, ໃນເມື່ອພຣະວິນຍານຂອງພຣະເຈົ້າຊົງເຂົ້າມາ
ຢູ່ໃນທ່ານແລ້ວ ທ່ານຈະຕັ້ງຕົ້ນປາກເປັນພາສາຕ່າງໆ
ຕາມທີ່ພຣະວິນຍານຊົງໂພດໃຫ້ເວົ້າ. ຄວາມລອດພົ້ນ
ໃນພຣະຄຳພີສັນຍາໃໝ່ ທຸກຄົນຈະຕ້ອງເຮັດຕາມ
ຂໍ້ພຣະຄັມພີທັງຫຼາຍນີ້ (ກິຈການ 2:4; ກິຈການ
8:14-20; ກິຈການ 10:44-48; ກິຈການ 19:1-6).

ໃນພຣະຄັມພີບອກພວກເຮົາທັງຫຼາຍວ່າ ອັນນຶ່ງ,
ຖ້າແມ້ນພຣະວິນຍານຂອງພຣະເຈົ້າ ຊົງສະຖິດຢູ່ໃນ
ເຈົ້າທັງຫຼາຍຢ່າງແທ້ຈິງແລ້ວພວກເຈົ້າກໍບໍ່ຢູ່ຝ່າຍ ມະ
ນຸດແຕ່ຢູ່ຝ່າຍພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີພຣະວິນ
ຍານຂອງພຣະຄຣິດຜູ້ນັ້ນກໍບໍ່ເປັນຂອງພຣະອົງ. ຖ້າ
ພຣະວິນຍານຂອງພຣະອົງ ຜູ້ຊົງບັນດານໃຫ້ພຣະເຢ
ຊູຊົງຄືນພຣະຊົນນັ້ນ ຊົງສະຖິດຢູ່ໃນພວກເຈົ້າ...ກໍ
ຈະຊົງບັນໃຫ້ກາຍທີ່ຕ້ອງຕາຍຂອງພວກເຈົ້າ ຄືນມີຊີ
ວິດໃໝ່ດ້ວຍຣິດແຫ່ງພຣະວິນຍານຂອງພຣະອົງທີ່ຊົງ
ສະຖິດຢູ່ໃນພວກເຈົ້າ. (ໂຣມ 8:9-11) ແລະພຣະຄັມພີ
ບອກເຮົາອີກວ່າ, ...ພວກຄົນທີ່ເຊື່ອໃນພຣະຄຣິດທີ່
ຕາຍແລ້ວກໍຈະຄືນຂຶ້ນມາກ່ອນ. ຫຼັງຈາກນັ້ນເຮົາ
ທັງຫຼາຍຜູ້ມີຊີວິດຍັງເປັນຢູ່ ກໍຈະຖືກຮັບຂຶ້ນໄປໃນ
ເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະ
ຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫຼະ, ພວກເຮົາກໍ
ຈະຢູ່ ນຳພຣະອົງເຈົ້າເປັນນິດ. ( 1 ເທຊະໂລນິກ 3:16,
17) *ພຣະສັນຍານັ້ນເປັນຂອງທ່ານທັງຫຼາຍ.*